ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດໂຄວິດ 19

ເລກທີ...0324/ອຄ.ກອຫ

ນະຄອນຫຼວງວຽງຈັນ, ວັນທີ...26..ເມສາ..2021

# ແຈ້ງການ

ເຖິງ: - ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
- ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.
- ຜູ້ອຳນວຍການໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ໃນຂອບເຂດທົ່ວປະເທດ ລວມທັງທີ່ຕັ້ງຢູ່ໃນນິຄົມອຸດສາຫະກຳ ແລະ ເຂດເສດຖະກິດພິເສດ.

ເລື່ອງ: ມາດຕະການເພີ່ມເຕີມວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ 19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ.

- ອີງຕາມຄຳສັ່ງວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ 19 ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມແຈ້ງການວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ 19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0310/ອຄ.ກອຫ, ລົງວັນທີ 23 ເມສາ 2021;
- ອີງຕາມທິດຊີ້ນຳຂອງຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 26 ເມສາ 2021.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການເພີ່ມເຕີມດັ່ງນີ້:**

1. ສ້າງແຜນກຳນົດມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 ພາຍໃນໂຮງງານຂອງຕົນ;
2. ໃຫ້ໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ທຸກຂະໜາດ, ທຸກປະເພດ ໃນຂອບເຂດທົ່ວປະເທດ ຫຼຸດຈຳນວນພະນັກງານລົງ ເພື່ອຮັກສາໄລຍະຫ່າງຂອງການເຮັດວຽກ ແລະ ຄວາມແອອັດ ໂດຍຈັດເປັນຫຼາຍຜຽນວຽກ ຫຼື ກະການເຮັດວຽກ;
3. ເຂັ້ມງວດການຮັກສາໄລຍະຫ່າງ ແລະ ປະຕິບັດມາດຕະການປ້ອງກັນການລະບາດຂອງພະຍາດໂຄວິດ 19 ຢູ່ຫໍພັກ, ຫ້ອງອາຫານ ແລະ ທາງເຂົ້າ-ອອກ.

4. ຕິດຕາມກວດກາພະນັກງານ ທີ່ຕິດເຊື້ອໂຄວິດ 19 ຫຼື ເປັນກຸ່ມສ່ຽງ ເພື່ອການແຍກປ່ຽວບຸກຄົນດັ່ງກ່າວ ແລະ ຜູ້ພົວພັນໃກ້ຊິດ ແລະ ລາຍງານຄະນະສະເພາະກິດທີ່ກ່ຽວຂ້ອງ ເພື່ອແກ້ໄຂໂດຍດ່ວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຮອງລັດຖະມົນຕີ

ຫົວໜ້າຄະນະສະເພາະກິດ

ສົມຈິດ ອິນທະມິດ